ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ....1225..../ອຄ.ກສຄ

ນະຄອນຫຼວງວຽງຈັນ, ວັນທີ...01 AUG 2017...

# ຂໍ້ຕົກລົງ
# ວ່າດ້ວຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ.
- ອີງຕາມ ໜັງສືສະເໜີຂອງກົມສົ່ງເສີມການຄ້າສະບັບເລກທີ 0389/ກສຄ, ລົງວັນທີ 23/05/2017.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄັດເລືອກນຳໃຊ້ ແລະ ຂັ້ນຕອນການຂໍອະນຸຍາດ ນຳໃຊ້ກາໝາຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ເພື່ອເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາ, ຄັດເລືອກປະເພດສິນຄ້າ ແລະ ຮູບແບບການບໍລິການ ໃນເມືອງໃດໜຶ່ງທີ່ໄດ້ ຄຸນນະພາບ ແລະ ເປັນເອກະລັກ ສະເພາະໃນການອະນຸຍາດໃຫ້ນຳໃຊ້ກາໝາຍ ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ແນໃສ່ສົ່ງເສີມຊຸກຍູ້ຂະບວນການຜະລິດເປັນສິນຄ້າ ຢູ່ຂັ້ນເມືອງ ແລະ ບ້ານໃຫ້ຟົດຟື້ນ ແລະ ຫລາກຫລາຍ ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຜະລິດ ແລະ ຜູ້ຊົມໃຊ້ ປະກອບສ່ວນແກ່ການພັດທະນາເສດຖະກິດຂອງຊາດໃຫ້ເຕີບໃຫຍ່ເຂັ້ມແຂງ.

### ມາດຕາ 2 ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ

ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ແມ່ນຜະລິດຕະພັນທີ່ນຳໃຊ້ສີມືແຮງງານ, ພູມປັນຍາ, ຫົວຄິດປະດິດສ້າງ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ເປັນເອກະລັກຂອງທ້ອງຖິ່ນນັ້ນ ຊຶ່ງປະກອບມີຜະລິດຕະພັນສິນຄ້າ ແລະ ຮູບແບບການບໍລິການ ທີ່ມີມູນເຊື້ອ ແລະ ເປັນມໍລະດົກຕົກທອດກັນມາ ໂດຍຖືເປັນຊັບສິນທາງປັນຍາຂອງຜູ້ຜະລິດຄິດແຕ່ງ:ຂຽນຫຍໍ້ເປັນພາສາລາວ "ໂອດອບແຫ່ງຊາດ" ຂຽນເປັນພາສາສາກົນ "One District One Product" ຂຽນຫຍໍ້ "ODOP".

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າ** ໝາຍເຖິງຜະລິດຕະພັນໃນຮູບແບບສິນຄ້າ ແລະ ຜະລິດຕະພັນ ໃນຮູບແບບການບໍລິການ.

2. **ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນຮູບແບບສິນຄ້າ** ໝາຍເຖິງ ສິນຄ້າທີ່ນຳໃຊ້ສີມືແຮງງານ, ຫົວຄິດປະດິດສ້າງ, ພູມປັນຍາ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ເປັນເອກະລັກໂດດເດັ່ນ, ເປັນມູນເຊື້ອມາຍາວນານ ທີ່ເປັນຜະລິດຕະພັນທີ່ຈັບບາຍໄດ້ເຊັ່ນ: ແຜ່ນແພ, ກາເຟ, ນ້ຳໝາກໄມ້ ແລະ ອື່ນໆ.

ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນຮູບແບບສິນຄ້າປະກອບດ້ວຍ 03 ໝວດສິນຄ້າຄື:

1) ປະເພດຫັດຖະກຳລວມ ມີ 05ກຸ່ມຄື:

- ກຸ່ມຫັດຖະກຳຕ່ຳແຜ່ນແພ: ແມ່ນຜະລິດຕະພັນທີ່ເຮັດດ້ວຍມື ແລະ ວັດຖຸດິບຫຼັກທີ່ນຳມາຜະລິດແມ່ນຝ້າຍ, ໄໝ, ເສັ້ນໄຍຈາກທຳມະຊາດ ທີ່ສາມາດນຳມາແປຮູບ ເປັນເສັ້ນແລະອື່ນໆເຊັ່ນ: ສິ້ນ, ເສື້ອ, ຜ້າບ່ຽງ, ຜ້າປູໂຕະ ແລະ ອື່ນໆ.

- ກຸ່ມຫັດຖະກຳຈັກສານ: ແມ່ນຜະລິດຕະພັນທີ່ເຮັດດ້ວຍມື ແລະ ວັດຖຸດິບຫຼັກທີ່ນຳມາຜະລິດແມ່ນໄມ້ໄຜ່, ຫວາຍ ແລະ ໄມ້ຊະນິດຕ່າງໆ ທີ່ສາມາດນຳມາແປຮູບເຊັ່ນ:ແອບເຂົ້າຫຼືຕິບເຂົ້າ, ພາເຂົ້າ, ໂຕະ, ຕັ່ງແລະອື່ນໆ.

- ກຸ່ມຫັດຖະກຳແກະສະຫຼັກໄມ້: ແມ່ນຜະລິດຕະພັນທີ່ເຮັດດ້ວຍມື ແລະ ວັດຖຸດິບຫຼັກທີ່ນຳມາຜະລິດແມ່ນໄມ້ເສດເຫຼືອ, ຕໍໄມ້, ຮາກໄມ້ ເພື່ອນຳມາຄວັດແກະເຊັ່ນ: ຮູບຄົນ, ຮູບສັດ, ຮູບທຳມະຊາດ ແລະ ອື່ນໆ.

- ກຸ່ມຫັດຖະກຳແກະສະຫຼັກໂລຫະ ແລະ ຂອງມີຄ່າ: ແມ່ນຜະລິດຕະພັນທີ່ເຮັດດ້ວຍມື ແລະ ວັດຖຸດິບຫຼັກ ທີ່ນຳມາຜະລິດແມ່ນເງິນ, ຄຳ, ເຫຼັກ, ທອງແດງ, ໂລ ແລະ ອື່ນໆ.

- ກຸ່ມຫັດຖະກຳເຄື່ອງປັ້ນດິນເຜົາ: ແມ່ນຜະລິດຕະພັນທີ່ເຮັດດ້ວຍມື ແລະ ວັດຖຸດິບຫຼັກທີ່ນຳມາຜະລິດແມ່ນມາຈາກດິນຊະນິດຕ່າງໆ ທີ່ນຳມາປັ້ນຫຼືແປຮູບເຊັ່ນ: ເຕົາຖ່ານ, ໄຫເຫຼົ້າ, ໂອ່ງນ້ຳ ແລະ ອື່ນໆ.

2) ປະເພດ ອາຫານ ແລະ ເຄື່ອງດື່ມ:

- ປະເພດອາຫານໝາຍເຖິງຜົນຜະລິດຈາກ ກະສິກຳ ແລະ ອາຫານແປຮູບແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຊຶ່ງໄດ້ຮັບການຢັ້ງຢືນມາດຕະຖານຈາກ ກົມອາຫານ ແລະ ຢາ (ກອຢ), ມາດຕະຖານກະສິກຳອິນຊີ(Organic), ກະສິກຳທີ່ດີ(GAP), ກະສິກຳທຳມະຊາດ(Natural Agriculture), ມາດຕະຖານ GMP, HACCP, ISO ແລະ ບັນຈຸຫຸ້ມຫໍ່ເພື່ອຈຳໜ່າຍທົ່ວໄປເຊັ່ນ: ເຂົ້າ,ໝາກໄມ້ກະປ໋ອງ, ເຂົ້າໜົມ, ແຈ່ວບອງ ແລະ ອື່ນໆ;

- ປະເພດເຄື່ອງດື່ມ ໝາຍເຖິງ: ສິນຄ້າປະເພດເຄື່ອງດື່ມແບບສຳເລັດຮູບ, ເຄິ່ງສຳເລັດຮູບທີ່ມີທາດເຫຼົ້າ ແລະ ບໍ່ມີທາດເຫຼົ້າຄື: ເຄື່ອງດື່ມທີ່ມີທາດເຫຼົ້າແມ່ນ ເຫຼົ້າບອງຢາ,ວາຍ, ເຫຼົ້າຂາວເປັນຕົ້ນ; ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າແມ່ນ ນ້ຳໝາກໄມ້, ນ້ຳສະໝຸນໄພ, ກາເຟປຸງສຳເຫຼັດຮູບ, ນ້ຳຂີງ, ຊາໃບມ້ອນ ແລະ ອື່ນໆ.

3) ປະເພດຢາພື້ນເມືອງ ໝາຍເຖິງ: ຜະລິດຕະພັນຢາທີ່ໄດ້ມາຈາກພືດ, ຕົ້ນໄມ້ ແລະ ພາກສ່ວນໃດໜຶ່ງຂອງພືດ, ຕົ້ນໄມ້, ສັດ ທີ່ເປັນຢາ ຊຶ່ງໄດ້ມາປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນ ລັກສະນະ ແລະ ຄວາມແຮງ ຂອງການອອກລິດນັ້ນ ໄດ້ຮັບການພິສູດ ຫຼື ຍັງບໍ່ໄດ້ຮັບການພິສູດແລ້ວດ້ວຍວິທະຍາສາດ ປະຈຸບັນ ແຕ່ຕ້ອງຖືກຮັບຮູ້ຈາກ ຂະແໜງສາທາລະນະສຸກ.

3. **ສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃນຮູບແບບບໍລິການ** ໝາຍເຖິງ: ສິນຄ້າທີ່ເປັນຊັບສິນທາງປັນຍາທີ່ບໍ່ສາມາດຈັບບາຍໄດ້ເຊັ່ນ: ຮູບແບບ, ວິທີການຕົບແຕ່ງສະຖານທີ່ໃຫ້ການບໍລິການ ຫຼື ລະບົບວິທີການໃຫ້ບໍລິການ ທີ່ເປັນເອກະລັກຂອງ ກຸ່ມ/ຊາວບ້ານ ທີ່ສ່ອງແສງເຖິງສິລະປະວັດທະນະທຳ, ສະຖານທີ່ທ່ອງທ່ຽວ, ຮີດຄອງປະເພນີ, ແບບແຜນການດຳລົງຊີວິດ, ສະແດງໃຫ້ເຫັນຄວາມເປັນເອກະລັກ, ໜຶ່ງດຽວ, ໂດດເດັ່ນ, ເປັນທີ່ຮູ້ຈັກ, ເປັນມູນເຊື້ອຂອງຊຸມຊົນ.

4. ຄະນະກຳມະການຂັ້ນເມືອງ ແລະ ຂັ້ນແຂວງ ໝາຍເຖິງ : ຄະນະກາມະການ ທີ່ຖືກແຕ່ງຕັ້ງເພື່ອຮັບຜິດຊອບຄັດເລືອກ ສິນຄ້າ ໂອດອບ ແຫ່ງຊາດ ຢູ່ຂັ້ນເມືອງ ແລະ ຂັ້ນແຂວງ. ຄະນະກຳມະການຂັ້ນເມືອງ ແມ່ນຖືກແຕ່ງຕັ້ງໂດຍເຈົ້າເມືອງ; ຂັ້ນແຂວງ,ນະຄອນຫຼວງວຽງຈັນ ແມ່ນຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ຊຶ່ງປະກອບດ້ວຍບັນດາຂະແໜງການທີ່ກ່ຽວຂ້ອງຄື: ຂະແໜງອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ວິທະຍາສາດ ແລະ ເຕັກໂນໂລຊີ, ສາທາລະນະສຸກ, ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນທີ່ຕິດພັນກັບການດຳເນີນການຜະລິດສິນຄ້າ ຫຼື ການໃຫ້ບໍລິການ ໂອດອບ ແຫ່ງຊາດ ໃນ ສປປ ລາວ.

## ໝວດທີ II
## ການຄັດເລືອກ ແລະ ອອກອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ

ມາດຕາ 5 ຫຼັກການໃນການຄັດເລືອກສິນຄ້າ ໂອດອບ ແຫ່ງຊາດ

ການຄັດເລືອກສິນຄ້າໃດໜຶ່ງເປັນສິນຄ້າ ໂອດອບ ແຫ່ງຊາດ ຕ້ອງປະຕິບັດຕາມຫຼັກການ ດັ່ງລຸ່ມນີ້:

1. ຜະລິດໂດຍວິສາຫະກິດ, ກຸ່ມຜູ້ຜະລິດ, ທຸລະກິດຄອບຄົວ, ສະຫະກອນ ທີ່ມີຂະບວນການຜະລິດ ຄືດັ່ງນີ້:

- ດຳເນີນການຜະລິດໂດຍນຳໃຊ້ແຮງງານຕໍ່າກວ່າ 50 ຄົນລົງມາ;
- ນຳໃຊ້ວັດຖຸດິບທີ່ມີຢູ່ທ້ອງຖິ່ນການຜະລິດ ຫລື ຈາກທ້ອງຖິ່ນອື່ນ ພາຍໃນປະເທດທີ່ເປັນວັດຖຸດິບສາມາດໝູນວຽນນຳໃຊ້ ຫຼື ຜະລິດທົດແທນຄືນໄດ້ເປັນຕົ້ນ: ປູກ, ລ້ຽງ, ເຕີບໂຕໄດ້ໂດຍທຳມະຊາດ ທີ່ ທ້ອງຖິ່ນມີການປົກປັກຮັກສາ ແລະ ຄຸ້ມຄອງຢ່າງເປັນລະບົບ.

2. ການຜະລິດ ແລະ ອອກແບບ ມີຄວາມເປັນເອກະລັກສະເພາະ ທີ່ຕິດພັນກັບວັດທະນະທຳທ້ອງຖິ່ນ ແລະ ຮີດຄອງປະເພນີ ຂອງຊາດ.

*3.* ເປັນສິນຄ້າທີ່ດຳເນີນການຜະລິດ ຫຼື ໃຫ້ການບໍລິການທີ່ຖືກຕ້ອງຕາມເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງໂດຍຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ, ຊັບສິນ ແລະ ຜົນປະໂຫຍດ ຂອງຜູ້ຊົມໃຊ້ ແລະ ສິ່ງແວດລ້ອມ.

4. ຖ້າເປັນຜະລິດຕະພັນຊະນິດດຽວກັນ ຈະຕ້ອງໄດ້ມີການຈຳແນກຄວາມແຕກຕ່າງກັນລະຫວ່າງ ການອອກແບບ, ການຫຸ້ມຫໍ່, ເຄື່ອງໝາຍການຄ້າ ຫລື ຊື່ກາໝາຍສິນຄ້າ ຂອງເຈົ້າຂອງຜະລິດຕະພັນ ຫລື ອາດຈະຕ້ອງໄດ້ຈົດທະບຽນເຄື່ອງໝາຍການຄ້າ ເພື່ອເປັນການຢັ້ງຢືນເຖິງຄວາມເປັນເອກະລັກ ເພື່ອຫລີກລ່ຽງການລອກຮຽນແບບເຊິ່ງກັນ ແລະ ກັນ.

## ມາດຕາ 6 ສິນຄ້າ ທີ່ບໍ່ສາມາດຄັດເລືອກເປັນ ສິນຄ້າ ໂອດອບ ແຫ່ງຊາດ

ສິນຄ້າ ທີ່ບໍ່ສາມາດຄັດເລືອກເປັນສິນຄ້າ ໂອດອບ ແຫ່ງຊາດ ແມ່ນສິນຄ້າທີ່ມີເງື່ອນໄຂ ຄືດັ່ງນີ້:

1. ນຳໃຊ້ວັດຖຸດິບນຳເຂົ້າຈາກຕ່າງປະເທດເກີນ 20%;
2. ນຳໃຊ້ວັດຖຸດິບທີ່ຜິດລະບຽບກົດໝາຍ;
3. ສິນຄ້າປອມແປງ ຫຼື ລະເມີດຊັບສິນທາງປັນຍາ;
4. ສິນຄ້າທີ່ມີຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ;
5. ສິນຄ້າທີ່ບໍ່ສາມາດຜະລິດ, ໃຫ້ການສະໜອງຢ່າງຕໍ່ເນື່ອງ ແລະ ຍືນຍົງ;
6. ສິນຄ້າທີ່ຜະລິດໂດຍບຸກຄົນ, ນິຕິບຸກຄົນຕ່າງປະເທດຝ່າຍດຽວ ຫຼື ຕ່າງປະເທດຮ່ວມກັບບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ.

## ມາດຕາ 7 ຂັ້ນຕອນການສະເໜີຂໍນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ

ການນຳສະເໜີ ຂໍນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ປະກອບມີຂັ້ນຕອນ ດັ່ງນີ້:

1. ຜູ້ທີ່ມີຈຸດປະສົງຕ້ອງການນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ໃຫ້ຍື່ນຄຳຮ້ອງ ຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຢູ່ເມືອງທີ່ຕົນເຮັດການຜະລິດສິນຄ້າ ດັ່ງກ່າວ ເພື່ອສະເໜີຄະນະກຳມະການຂັ້ນເມືອງ ຄົ້ນຄວ້າ ແລະ ພິຈາລະນາ;

2. ພາຍຫລັງຄະນະກຳມະການຂັ້ນເມືອງ ຮັບຮອງເອົາແລ້ວໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ນຳສົ່ງສຳນວນເອກະສານຄຳຮ້ອງ ພ້ອມດ້ວຍໃບຢັ້ງຢືນຮັບຮອງຂອງຄະນະກຳມະການຂັ້ນເມືອງ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອນຳສະເໜີຕໍ່ຄະນະກຳມະການຄັດເລືອກຂັ້ນແຂວງ ຄົ້ນຄວ້າພິຈາລະນາ;

3. ພາຍຫລັງ ຄະນະກຳມະການຂັ້ນແຂວງ ຮັບຮອງເອົາແລ້ວໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ນຳສົ່ງສຳນວນເອກະສານຄຳຮ້ອງພ້ອມດ້ວຍໃບຢັ້ງຢືນຮັບຮອງຂອງ ຄະນະກຳມະການຂັ້ນແຂວງ ໃຫ້ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າເພື່ອພິຈາລະນາອອກໃບອະນຸຍາດນຳໃຊ້ກາໝາຍ ສິນຄ້າ ໂອດອບ ແຫ່ງຊາດ.

## ມາດຕາ 8 ກຳນົດເວລາໃນການພິຈາລະນາອະນຸຍາດໃຫ້ນຳໃຊ້ກາໝາຍ

ການພິຈາລະນາອະນຸຍາດນຳໃຊ້ກາໝາຍສິນຄ້າ ໂອດອບ ແຫ່ງຊາດ ໃນແຕ່ລະຂັ້ນມີກຳນົດເວລາ ຄືດັ່ງນີ້:

1. ຄະນະກຳມະການຂັ້ນເມືອງ ເປັນຜູ້ລົງປະເມີນ ແລະ ເກັບກຳຂໍ້ມູນຈາກສະຖານທີ່ເຮັດການຜະລິດຕົວຈິງ ເພື່ອນຳມາຄົ້ນຄວ້າພິຈາລະນາ ແລ້ວແຈ້ງໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ພາຍໃນ 10 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ ເພື່ອກະກຽມສັງລວມ ແລະ ນຳສົ່ງສຳນວນເອກະສານຫົວໜ່ວຍທຸລະກິດ ທີ່ຂໍອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ໃຫ້ແກ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ.

2. ຄະນະກຳມະການຂັ້ນແຂວງ ຈະເປັນຜູ້ສັງລວມບັນຊີສຳນວນເອກະສານຈາກບັນດາເມືອງໃນແຂວງຂອງຕົນ ສະເໜີມາ ແລ້ວຈັດກອງປະຊຸມປະເມີນຂອງຄະນະກຳມະການຄັດເລືອກຂັ້ນແຂວງ ຫຼື ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າພິຈາລະນາຮັບຮອງເອົາແລ້ວແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ ເພື່ອກະກຽມ ແລະ ນຳສົ່ງສຳນວນເອກະສານຄຳຮ້ອງ ພ້ອມດ້ວຍໃບຢັ້ງຢືນຮັບຮອງຂອງຄະນະກຳມະການຂັ້ນແຂວງ ໃຫ້ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ 10 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ;

3. ຫຼັງຈາກກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບບັນຊີສຳນວນເອກະສານສະເໜີຈາກຂັ້ນແຂວງ ຫຼື ນະຄອນຫຼວງ ເພື່ອນຳມາຄົ້ນຄ້ວາພິຈາລະນາ, ແຈ້ງໃຈ ແລະ ອອກໃບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ພາຍໃນ 10 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

### ມາດຕາ 9 ເນື້ອໃນ ແລະ ກຳນົດເວລາ ການນຳໃຊ້ກາໝາຍສິນຄ້າ ໂອດອບ ແຫ່ງຊາດ

ສິນຄ້າ ໂອດອບ ແຫ່ງຊາດ ຕ້ອງປະກອບມີເນື້ອໃນຕົ້ນຕໍດັ່ງນີ້:ປະຫວັດຄວາມເປັນມາ, ປະເພດສິນຄ້າ, ຂັ້ນຕອນການປຸງແຕ່ງ, ແຫຼ່ງທີ່ມາຂອງວັດຖຸດິບ, ສ່ວນປະສົມ, ວັນໝົດອາຍຸ ແລະ ຂໍ້ມູນໂພສະນາການ.

ໄລຍະເວລາໃນການນຳໃຊ້ກາໝາຍ ສິນຄ້າ ໂອດອບ ແຫ່ງຊາດ ແມ່ນອີງໃສ່ສັນຍາການນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ຊຶ່ງມີອາຍຸການນຳໃຊ້ 03 ປີ ກ່ອນໝົດອາຍຸນຳໃຊ້ 06 ເດືອນ ໃຫ້ສະເໜີຂໍຕໍ່ອາຍຸການນຳໃຊ້ ຕາມຂັ້ນຕອນ ແລະ ກຳນົດເວລາຂອງການ ຂໍອະນຸຍາດນຳໃຊ້ ທີ່ກຳນົດໃນມາດຕາ 8 ແລະ 9 ຂອງຂໍ້ຕົກລົງສະບັບນີ້. ຖ້າບໍ່ສະເໜີ ຕາມກຳນົດເວລາດັ່ງກ່າວ ຖືວ່າສະລະສິດໂດຍອັດຕະໂນມັດ .

### ມາດຕາ 10 ການສະເໜີເພີ່ມ ຫຼື ຫຼຸດລາຍການສິນຄ້າ ໂອດອບ ແຫ່ງຊາດ

ຜູ້ໄດ້ຮັບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ສາມາດສະເໜີເພີ່ມລາຍການສິນຄ້າທີ່ຕົນຜະລິດຂຶ້ນມາໃໝ່ເຂົ້າ ໃນລາຍການສິນຄ້າ ໂອດອບ ແຫ່ງຊາດ ໄດ້ຕາມຂັ້ນຕອນ ແລະ ກຳນົດເວລາຂອງການຂໍອະນຸຍາດນຳໃຊ້ຕາມທີ່ກຳນົດໃນມາດຕາ 8 ແລະ 9 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີມີສິນຄ້າໃດໜຶ່ງທີ່ໄດ້ຖືກຮັບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ແລ້ວແຕ່ຖ້າພົບເຫັນວ່າບໍ່ຖືກຕ້ອງຕາມເງື່ອນໄຂທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຄະນະກຳມະການຄັດເລືອກຂັ້ນເມືອງ, ຂັ້ນແຂວງ ສາມາດນຳສະເໜີຕໍ່ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຕັດອອກຈາກເນື້ອໃນໃບອະນຸຍາດ ຫຼື ລົບລ້າງໃບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ.

## ໝວດທີ III
## ຄວາມໝາຍ ແລະ ການນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ

### ມາດຕາ 11 ອົງປະກອບ ແລະ ຄວາມໝາຍຂອງກາໝາຍ ໂອດອບ ແຫ່ງຊາດ

ກາໝາຍສິນຄ້າ ໂອດອບ ແຫ່ງຊາດ ປະກອບມີ: ເລກໜຶ່ງລາວ, ລວດລາຍໃນເລກໜຶ່ງລາວ ແລະ ສີແທ້ຂອງກາໝາຍ ຊຶ່ງແຕ່ລະອົງປະກອບມີຄວາມໝາຍດັ່ງນີ້:

1. ເລກໜຶ່ງລາວ (໑) ສ່ອງແສງໃຫ້ເຫັນຂະບວນການຜະລິດສິນຄ້າ ແລະ ຮູບແບບການບໍລິການທີ່ເປັນເອກະລັກ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ຢູ່ ສປປ ລາວ ແລະ ມີຄວາມໝາຍວ່າ ເປັນວຽກບຸລິມະ

ສິດ ອັນດັບໜຶ່ງຂອງລັດຖະບານໃນການແກ້ໄຂຄວາມທຸກຍາກ, ສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນ ບົນພື້ນຖານການນຳໃຊ້ພູມປັນຍາທ້ອງຖິ່ນ ແລະ ທ່າແຮງຂອງທ້ອງຖິ່ນ;

2. ລວດລາຍໃນເລກໜຶ່ງລາວໝາຍເຖິງ ຄວາມປານິດ, ສີໄມ້ລາຍມື ແລະ ພູມປັນຍາທ້ອງຖິ່ນຂອງປະຊາຊົນລາວ;

3. ສີແທ້ຂອງກາໝາຍແມ່ນ ສີມໍລະກົດຊຶ່ງເປັນສີແຫ່ງສັນຍາລັກຂອງ ການພັດທະນາເສດຖະກິດການຄ້າ, ແຕ່ການນຳໃຊ້ຕົວຈິງນັ້ນ ຂະໜາດຂອງກາໝາຍແມ່ນ ບໍ່ຕາຍຕົວຂຶ້ນກັບລັກສະນະ ແລະ ຂະໜາດຂອງຜະລິດຕະພັນ.

ມາດຕາ 12 ການນຳໃຊ້ກາໝາຍສິນຄ້າ ໂອດອບ ແຫ່ງຊາດ

ການນຳໃຊ້ ກາໝາຍສິນຄ້າ ໂອດອບ ແຫ່ງຊາດ ຕ້ອງນຳໃຊ້ໃນເປົ້າໝາຍ ລຸ່ມນີ້:

1. ໃຊ້ເປັນກາໝາຍສິນຄ້າ ໂອດອບ ແຫ່ງຊາດ ຕິດໃສ່ຜະລິດຕະພັນສິນຄ້າ ຫຼື ສະຖານທີ່ບໍລິການເອກະລັກ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ຊຶ່ງປະເພດສິນຄ້າ ຫຼື ການບໍລິການດັ່ງກ່າວນັ້ນທີ່ໄດ້ຮັບໃບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ;

2. ໃຊ້ຕິດ ຫຼື ພິມ ໃສ່ເສື້ອຜ້າ, ເອກະສານ ແລະ ສິ່ງພິມປະເພດຕ່າງໆ ເພື່ອເຜີຍແຜ່ໂຄສະນາປະຊາສຳພັນ ແລະ ເພື່ອສ້າງພາບພົດທີ່ດີເດັ່ນ ໃຫ້ແກ່ຂະບວນການ ໂອດອບ ແຫ່ງຊາດ ຢ່າງກ້ວາງຂວາງ;

3. ໃຊ້ໃນງານວາງສະແດງສິນຄ້າ ໂອດອບ ແຫ່ງຊາດ, ສູນວາງສະແດງສິນຄ້າ ໂອດອບ ແຫ່ງຊາດ ແລະ ສະຖານທີ່ຈຳໜ່າຍສິນຄ້າ ໂອດອບ;

4. ໃຊ້ກັບບ້ານ, ກຸ່ມບ້ານ/ສະຖານທີ່ຜະລິດ ຫຼື ສະຖານທີ່ບໍລິການ ທ່ອງທ່ຽວ ທີ່ນອນຢູ່ໃນເປົ້າໝາຍໂຄງການ/ຂະບວນການ ສົ່ງເສີມ ແລະ ພັດທະນາຂອງເມືອງເພື່ອສ້າງໃຫ້ເປັນສິນຄ້າ ແລະ ການບໍລິການເອກະລັກ ໜຶ່ງເມືອງ ໜຶ່ງຜະລິດພັນ "ໂອດອບ" ແຫ່ງຊາດ ເພື່ອກະກຽມປະກາດຮັບຮອງເອົາຢ່າງເປັນທາງການ.

5. ໃຊ້ໃນກິດຈະກຳອື່ນໆ ທີ່ນອນຢູ່ໃນຂະບວນການປະຕິບັດນະໂຍບາຍສົ່ງເສີມການຜະລິດສິນຄ້າ/ຮູບແບບການບໍລິການ ເອກະລັກ: ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ຫລື ໂອດອບ ແຫ່ງຊາດ.

ມາດຕາ 13 ກິດຈະກຳຫຼັກການຈັດຕັ້ງປະຕິບັດວຽກງານ ໂອດອບ ແຫ່ງຊາດ ປະຈຳປີ

ການຈັດຕັ້ງປະຕິບັດວຽກງານ ໂອດອບ ແຫ່ງຊາດ ປະຈຳປີ ແມ່ນມີ 02 ກິດຈະກຳຫຼັກ ຄື:

1. ກອງປະຊຸມຖອດຖອນບົດຮຽນກ່ຽວກັບວຽກງານ ໂອດອບ ແຫ່ງຊາດ ທົ່ວປະເທດ ເຊິ່ງໃນນີ້ຈະປະກອບມີກິດຈະກຳງານວາງສະແດງສິນຄ້າ ໂອດອບ ແຫ່ງຊາດປະຈຳປີ ເຊິ່ງແຕ່ລະປີຈະມີການໝູນວຽນໄປຈັດແຕ່ລະພາກທົ່ວປະເທດ.

2. ການປະດັບດາວນາມມະຍົດໃຫ້ແກ່ສິນຄ້າ ໂອດອບ ແຫ່ງຊາດ ໃນທົ່ວປະເທດໃນທຸກໆ 02 ປີ ໂດຍອີງໃສ່ເງື່ອນໄຂຄວາມພ້ອມ ແລະ ທ່າແຮງຂອງແຂວງ (ມີບົດແນະນຳໃນການຄັດເລືອກສະເພາະ).

## ໝວດທີ IV

## ຂໍ້ຫ້າມ

**ມາດຕາ 14 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເປັນສື່ກາງ, ໃຫ້ສິນບົນ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ;
3. ມີພຶດຕິກຳອື່ນໆ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມ ສຳລັບ ຜູ້ນຳໃຊ້ ກາໝາຍ ໂອດອບ ແຫ່ງຊາດ**

ຫ້າມຜູ້ນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ໃຊ້ກາໝາຍຫຼື ຄຳວ່າສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ ຫຼື ໂອດອບ ເປັນຊື່ບໍລິສັດ, ວິສາຫະກິດ, ທຸລະກິດ, ຜະລິດຕະພັນ ຫຼື ກິດຈະການ ທີ່ບໍ່ມີສ່ວນພົວພັນກັບການສົ່ງເສີມ ໂອດອບ ແຫ່ງຊາດ ແຕ່ປະການໃດ;
2. ປອມແປງ ຫຼື ປ່ຽນແປງເນື້ອໃນ ໃບອະນຸຍາດນຳໃຊ້ກາໝາຍໂອດອບ;
3. ນຳໃຊ້ກາໝາຍ ໂອດອບ ນອກເໜືອຈາກຂອບເຂດທີ່ໄດ້ຮັບອະນຸຍາດ;
4. ມີພຶດຕິກຳອື່ນໆ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ V

## ອົງການຄຸ້ມຄອງວຽກງານ ສິນຄ້າ ໂອດອບ ແຫ່ງຊາດ

**ມາດຕາ 16 ອົງການຄຸ້ມຄອງວຽກງານ ສິນຄ້າ ໂອດອບ ແຫ່ງຊາດ**

ກະຊວງອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງ ວຽກງານສິນຄ້າ ໂອດອບ ແຫ່ງຊາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ.

ອົງການຄຸ້ມຄອງວຽກງານ ສິນຄ້າ ໂອດອບ ແຫ່ງຊາດ ປະກອບດ້ວຍ:

1. ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ;
2. ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ;
3. ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ.

ມາດຕາ 17 ສິດ ແລະ ໜ້າທີ່ຂອງ ກົມສົ່ງເສີມການຄ້າ

ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານສິນຄ້າ ໂອດອບ ແຫ່ງຊາດ, ກົມສົ່ງເສີມການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບ ການນຳໃຊ້ກາໝາຍ, ການຄຸ້ມຄອງ ແລະ ສົ່ງເສີມ ສິນຄ້າ ໂອດອບ ແຫ່ງຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບ ການນຳໃຊ້ກາໝາຍ, ການຄຸ້ມຄອງ ແລະ ສົ່ງເສີມ ສິນຄ້າ ໂອດອບ ແຫ່ງຊາດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາ ອອກ, ໂຈະ ຫຼື ລຶບລ້າງໃບອະນຸຍາດນຳໃຊ້ກາໝາຍ ສິນຄ້າ ໂອດອບ ແຫ່ງຊາດ;

4. ແຕ່ງຕັ້ງຄະນະຮັບຜິດຊອບໃນການຄັດເລືອກໃຫ້ດາວນາມມະຍົດແກ່ຜູ້ຜະລິດ ສິນຄ້າ ໂອດອບ ແຫ່ງຊາດ;

5. ໃຫ້ຄຳປຶກສາ ແລະ ແນະນຳ ໃຫ້ແກ່ຄະນະກຳມະການຄັດເລືອກຂັ້ນເມືອງ, ຂັ້ນແຂວງ ແລະ ຜູ້ປະກອບການໃນການສະເໜີຂໍອະນຸຍາດນຳໃຊ້ກາໝາຍ, ການພັດທະນາ ແລະ ສົ່ງເສີມການຜະລິດ, ຫຸ້ມຫໍ່, ການສ້າງຍີ່ຫໍ້ເພື່ອໃຫ້ສາມາດເຂົ້າສູ່ຕະຫຼາດ ພາຍໃນ ແລະ ຕ່າງປະເທດ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບ ວຽກງານ ສິນຄ້າ ໂອດອບ ແຫ່ງຊາດ ໃນຂອບເຂດທົ່ວປະເທດ ໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຮັບຊາບ ໃນແຕ່ລະໄລຍະຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ

ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ສິນຄ້າ ໂອດອບ ແຫ່ງຊາດ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບ ການນຳໃຊ້ກາໝາຍ, ການຄຸ້ມຄອງ ແລະ ສົ່ງເສີມສິນຄ້າ ໂອດອບ ແຫ່ງຊາດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ພາຍໃນແຂວງຂອງຕົນ ຢ່າງທົ່ວເຖິງ;

2. ປະສານກັບຄະນະກຳມະການຂັ້ນແຂວງ ເພື່ອພິຈາລະນາຜະລິດຕະພັນທີ່ຄະນະກຳມະການຂັ້ນເມືອງ ສະເໜີມາ ແລະ ປະສານກັບກົມສົ່ງເສີມການຄ້າ ເພື່ອພິຈາລະນາອອກໃບອະນຸຍາດນຳໃຊ້ກາໝາຍ ສິນຄ້າ ໂອດອບ ແຫ່ງຊາດ.

3. ເປັນເສນາທິການແຕ່ງຕັ້ງຄະນະກຳມະການຄັດເລືອກສິນຄ້າ ໂອດອບ ແຫ່ງຊາດຂັ້ນແຂວງ;

4. ໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນພາຍໃນແຂວງຂອງຕົນ ຫຼັງຈາກທີ່ຜູ້ຜະລິດໄດ້ຮັບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ;

5. ໃຫ້ຄຳປຶກສາ ແລະ ແນະນຳໃຫ້ແກ່ຄະນະກຳມະການຄັດເລືອກຂັ້ນເມືອງ ແລະ ທີ່ວໜ່ວຍຜູ້ປະກອບການ ໃນການຂໍອະນຸຍາດນຳໃຊ້ກາໝາຍສິນຄ້າໂອດອບແຫ່ງຊາດ, ການພັດທະນາ ແລະ ສົ່ງເສີມການຜະລິດ, ຫຸ້ມຫໍ່, ການສ້າງຍີ່ຫໍ້ ເພື່ອໃຫ້ສາມາດເຂົ້າສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບ ວຽກງານ ສິນຄ້າ ໂອດອບ ແຫ່ງຊາດ ພາຍໃນແຂວງຂອງຕົນ ໃຫ້ກົມສົ່ງເສີມການຄ້າ ຮັບຊາບ ໃນແຕ່ລະໄລຍະຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 19 ສິດ ແລະ ໜ້າທີ່ ຂອງ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ

ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ສິນຄ້າ ໂອດອບ ແຫ່ງຊາດ, ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບ ການນຳໃຊ້ກາໝາຍ, ການຄຸ້ມຄອງ ແລະ ສົ່ງເສີມສິນຄ້າ ໂອດອບ ແຫ່ງຊາດ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ພາຍໃນ ເມືອງ ຂອງຕົນຢ່າງທົ່ວເຖິງ;

2. ປະສານກັບ ຄະນະກຳມະການຂັ້ນເມືອງ ເພື່ອພິຈາລະນາຮັບຮອງເອົາສິນຄ້າ ໂອດອບ ແຫ່ງຊາດ ພາຍໃນເມືອງຂອງຕົນ ແລ້ວນຳສະເໜີຕໍ່ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອພິຈາລະນາຮັບຮອງເປັນສິນຄ້າ ໂອດອບ ແຫ່ງຊາດ ພາຍໃນເມືອງຂອງຕົນ;

3. ເປັນເສນາທິການແຕ່ງຕັ້ງຄະນະກຳມະການຄັດເລືອກສິນຄ້າ ໂອດອບ ແຫ່ງຊາດ ຂັ້ນເມືອງ;

4. ໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນພາຍໃນເມືອງຂອງຕົນ ຫຼັງຈາກທີ່ຜູ້ຜະລິດໄດ້ຮັບອະນຸຍາດ ນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ;

5. ໃຫ້ຄຳປຶກສາ ແລະ ແນະນຳ ໃຫ້ແກ່ຄະນະກຳມະການຄັດເລືອກຂັ້ນເມືອງ ແລະ ຫົວໜ່ວຍ ຜູ້ປະກອບການ ໃນການຂໍອະນຸຍາດນຳໃຊ້ກາໝາຍ ສິນຄ້າ ໂອດອບ ແຫ່ງຊາດ, ການພັດທະນາ ແລະ ສົ່ງເສີມການຜະລິດ, ຫຸ້ມຫໍ່, ການສ້າງຍີ່ຫໍ້ ເພື່ອໃຫ້ສາມາດເຂົ້າສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສິນຄ້າ ໂອດອບ ແຫ່ງຊາດ ພາຍໃນເມືອງຂອງຕົນ ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຮັບຊາບໃນແຕ່ລະໄລຍະຢ່າງເປັນ ປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 20 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ທາງວິໄນ, ປັບໄໝທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ແລະ ຖືກປະຕິບັດ ມາດຕະການໂທດເພີ່ມ ໃນກໍລະນີ ດັ່ງນີ້:

1. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ ຫາກມີການກະທຳທີ່ເປັນການ ສ້າງຄວາມເສື່ອມເສຍຕໍ່ພາບພົດຂອງຜະລິດຕະພັນສິນຄ້າ ໂອດອບ ແຫ່ງຊາດ ຫຼືສະແດງຄວາມບໍ່ຊື່ສັດ ຫຼື ບໍ່ມີຈັນຍາບັນໃນການດຳເນີນທຸລະກິດຈະຖືກສຶກສາອົບຮົມ ຫຼື ຖອນໃບອະນຸຍາດນຳໃຊ້ກາໝາຍ ໂອດອບ ແຫ່ງຊາດ;

2. ໃນກໍລະນີໄດ້ຮັບອະນຸຍາດນໍາໃຊ້ກາໝາຍແລ້ວ, ຫາກມີປະກົດການຊີ້ໃຫ້ເຫັນວ່າຜູ້ໄດ້ຮັບອະນຸຍາດຂາດຄຸນສົມບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບຫຼັກການ, ຈະຖືກສຶກສາອົບຮົມ ຫຼື ຖອນໃບອະນຸຍາດການນໍາໃຊ້ກາໝາຍນັ້ນ.

3. ຜູ້ທີ່ນໍາໃຊ້ກາໝາຍ ໂອດອບ ແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຖືກຖອນ ໃບອະນຸຍາດການນໍາໃຊ້ກາໝາຍ ໂອດອບ ແຫ່ງຊາດແລ້ວ, ແຕ່ຍັງສືບຕໍ່ນໍາໃຊ້ກາໝາຍ ໂອດອບ ແຫ່ງຊາດ ຕ້ອງຮັບຜິດຊອບການກະທໍາດັ່ງກ່າວ ຕາມລະບຽບກົດໝາຍ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສົ່ງເສີມການຄ້າ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ເປັນເຈົ້າການໃນການປະສານສົມທົບກັບຄະນະກໍາມະການຂັ້ນແຂວງ, ຂັ້ນເມືອງ ແລະ ປະສານກັບອໍານາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດສິດຂອງຕົນ ໃຫ້ມີປະສິດທິຜົນສູງ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ຫຼັງຈາກ 15 ວັນ ນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ນໍາໃຊ້ປ່ຽນແທນ ລະບຽບການນໍາໃຊ້ກາໝາຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ (ໂອດອບ) ສະບັບເລກທີ 2433/ອຄ. ສພຄ, ລົງວັນທີ 26 ພະຈິກ 2012.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ